# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 11 ຕຸລາ 2009 (10-11-2009)

## ວີຣະຊົນຜູ້ທຳການສູ້ຮົບ

**ຂໍ້ພຣະຄັມພີໃນບົດຮຽນ**: ມາຣະໂກ 12:13-17, 28-31, 38-40

**ຜົນສະທ້ອນຕໍ່ຊີວິດ**

ບົດຮຽນຈະຊ່ວຍໃຫ້ທ່ານມີກຳລັງໃຈຕໍ່ສູ້ເພື່ອພຣະເຈົ້າ ໃນສັງຄົມທີ່ບໍ່ມີພຣະເຈົ້າ

**ເປົ້າໝາຍຂອງບົດຮຽນ**

ພຣະເຢຊູໄດ້ອອກສູ້ຮົບໃນສມັຍທີ່ພຣະອົງຍັງຊົງຮັບໃຊ້ຢູ່ ແລະພຣະອົງຍັງຊົງຮຽກເອີ້ນໃຫ້ຜູ້ທີ່ຕິດຕາມພຣະອົງທຳການສູ້ຮົບຄືກັນ. ສນາມຮົບຂອງພວກເຮົາແມ່ນກ່ຽວກັບການຂັດແຍ່ງລະຫວ່າງຄວາມດີແລະຄວາມຊົ່ວ--ທາງຂອງພຣະເຈົ້າແລະທາງຂອງໂລກ. ການຕໍ່ສູ້ນີ້ລວມຢູ່ໃນການຂັດແຍ່ງດ້ວຍອຳນາດຂອງໂລກພ້ອມກັບຄວາມເຂົ້າໃຈຜິດໃນຫລັກການສອນພຣະຄັມພີ ແລະສາສນາທີ່ຕົກທອດຕາມປະເພນີ.

**ຄວາມສຳຄັນຂອງບົດຮຽນ**

ຄຣິສຕຽນຜູ້ທີ່ໃຊ້ຊີວິດເອົາຈິງເອົາຈັງກ່ຽວກັບຄວາມເຊື່ອຈະຕົກຢູ່ໃນຄວາມຂັດແຍ່ງກັບຝ່າຍໂລກ.

### ການສຶກສາພຣະຄັມພີ

ໃນທ່ຽງຄືນນຶ່ງເມື່ອຂ້າພະເຈົ້າມີອາຍຸສິບສອງປີ ມີສຽງຍ່າງເຂົ້າມາໃນຫ້ອງເຮັດໃຫ້ຂ້າພະເຈົ້າຕື່ນກາງຫລັບ. ພໍ່ຂອງຂ້າພະເຈົ້າໄດ້ຍິນສຽງຄົນກຳລັງບຸກເຂົ້າມາໃນເຮືອນຂອງເຮົາ, ໃນຂະນະທີ່ພໍ່ຂອງຂ້າພະເຈົ້າ ກຳລັງລໍຖ້າຕຳຣວດມານັ້ນ ເພິ່ນໄດ້ຊອກຫາວິທີທາງເອົາຕົວເຂົ້າແລກເພື່ອປ້ອງກັນຄອບຄົວຂອງເພິ່ນ. ຂ້າພະເຈົ້າມີຄວາມຢ້ານກົວຫລາຍແຕ່ມີຄວາມຮູ້ສຶກອົບອຸ່ນດ້ວຍຄວາມຮັກ ເພາະວ່າພໍ່ຂອງຂ້າພະເຈົ້າໄດ້ສະແດງໃຫ້ເຫັນວ່າເພິ່ນກຳລັງຕຽມພ້ອມທີ່ຈະຕໍ່ສູ້ເພື່ອຂ້າພະເຈົ້າ.

ຄຣິສຕຽນຕ້ອງທຳຄວາມສງົບສຸກໃນທຸກໂອກາດທີ່ມີ ແຕ່ຄວາມຮັກກັບພຣະເຢຊູແລະຄວາມຢາກຕິດຕາມພຣະອົງຢ່າງຈິງຮັກພັກດີບາງຄັ້ງຈະນຳເຮົາໄປພົບກັບຄວາມຂັດແຍ່ງກັບໂລກ. ພວກເຮົາຕ້ອງຖາມຕົວເອງວ່າ: *ຂ້ອຍຕຽມພ້ອມທີ່ຈະຢືນແລະຕໍ່ສູ້ເພື່ອຫຍັງ?* ພຣະຄັມທີ່ພວກເຮົາຮຽນວັນນີ້ໄດ້ອະທິບາຍສາມຄັ້ງທີ່ພຣະເຢຊູໄດ້ຢືນຢັນເຖິງຄວາມຈິງ ເຖິງແມ່ນການຢືນຢັນໄດ້ພາພຣະອົງໃຫ້ມີຄວາມຂັດແຍ່ງກັບພວກທີ່ບໍ່ມັກພຣະອົງ.

**1. <u>ປະເຊີນກັບຄວາມຈິງຮັກພັກດີ</u>**: ມາຣະໂກ 12:13-17

ພວກຟາຣີຊາຍ ແລະພັກພວກຂອງກະສັດເຮໂຣດພຍາຍາມຈະຈັບຜິດພຣະເຢຊູດ້ວຍຄຳຖາມທີ່ມັກພາໃຫ້ເກີດບັນຫາທາງດ້ານການເມືອງໃນສມັຍນັ້ນ. ປະເທດອິສຣາເອັນໄດ້ຢູ່ພາຍໃຕ້ການປົກຄອງຂອງຣາຊອານາຈັກໂຣ

ມັນ, ຄົນຢິວບາງຄົນຄິດວ່າການຈ່າຍພາສີໃຫ້ຣັຖບານໂຣມັນນັ້ນຜິດຕໍ່ນ້ຳພຣະທັຍຂອງພຣະເຈົ້າ, ບາງຄົນກໍເຊື່ອວ່າ ໃນຖານະທີ່ເປັນຜູ້ທີ່ມີຄວາມເຊື່ອໃນພຣະເຈົ້າ ຈຳເປັນຕ້ອງຈ່າຍພາສີເພື່ອອູ້ມຊູຄວາມຈຳເປັນຂອງຣັຖບານ. ດັ່ງນັ້ນ ສັດຕຣູຂອງພຣະເຢຊູຈຶ່ງມັກຈະເອົາເຣື່ອງນີ້ມາຄອຍຈັບເອົາຄວາມຜິດກັບພຣະອົງ.

ສັດຕຣູຂອງພຣະເຢຊູໄດ້ຖາມວ່າ, ເຮົາຄວນຈ່າຍພາສີຫລືບໍ່? ຖ້າພຣະເຢຊູຊົງກ່າວວ່າຄົນຢິວຄວນຈ່າຍພາສີ ໃຫ້ພວກໂຣມັນ, ພຣະອົງອາດຈະເສັຽການສນັບສນຸນຈາກຫລາຍຄົນທີ່ຕິດຕາມພຣະອົງ. ຖ້າວ່າພຣະອົງຊົງບອກພວກ ເຂົາວ່າບໍ່ຕ້ອງຈ່າຍ, ພວກສັດຕຣູຂອງພຣະອົງກໍຈະລາຍງານພວກໂຣມັນວ່າພຣະອົງເປັນຜູ້ກໍ່ສ້າງບັນຫາ. ພຣະເຢຊູບໍ່ ໄດ້ຖືກຈັບຜິດດ້ວຍຄຳຖາມຂອງເຂົາ--ຫລືຖືກຈັບຜິດດ້ວຍຄຳຖາມຂອງພວກເຮົາ. ບາງຄົນຈະພຍາຍາມຍົກຂໍ້ອ້າງ ເພື່ອຫລີກການຮຽກເອີ້ນຈາກພຣະຄຣິດດ້ວຍອ້າງເຖິງຄຳຖາມກ່ຽວກັບຄວາມລຶກລັບໃນຊີວິດ ແລະຄວາມໝາຍໃນ ຄວາມເຊື່ອຄຣິສຕຽນທີ່ບໍ່ມີຄຳຕອບ. ໜ້າເສັຽໃຈ ທີ່ພວກເຮົາຫ້າງແຮ້ວໃສ່ເຮົາເອງດ້ວຍຕົວະຕົນເອງວ່າພຣະອົງຄວນ ຜ່ານຂໍ້ສອບຂອງເຮົາ.

ພຣະເຢຊູຕອບພວກທີ່ຟັງພຣະອົງຄືນໂດຍບອກໃຫ້ເຂົາເອົາຫລຽນເດນາຣິອົນມາເບິ່ງ ແລ້ວພຣະອົງຊົງບອກ ໃຫ້ເຂົາອະທິບາຍກ່ຽວກັບຮູບແລະໜັງສືທີ່ສລັກໄວ້ເທິງຫລຽນນັ້ນ, ພວກເຂົາຕອບພຣະອົງວ່າ, ກາຍຊາ. ພຣະອົງຊົງ ໃຊ້ຄຳຖາມນີ້ຖາມພວກເຂົາເພື່ອຊ່ວຍໃຫ້ພວກເຂົາເຫັນຄວາມຈິງກ່ຽວກັບຄວາມສຳພັນລະຫວ່າງປະຊາຊົນ ແລະ ຣັຖບານ. ປະຊາຊົນຄວນຈ່າຍພາສີຄືນໃຫ້ ກາຍຊາ ເພື່ອອຸ້ມຊູຣັຖບານກະທຳສິ່ງທີ່ດີ. ພວກເຮົາກໍຮູ້ຢູ່ວ່າແມ່ນຣັຖ ບານໃດກໍຕາມຍັງມີຂໍ້ບົກພ່ອງຫລາຍຢູ່, ພວກເຮົາຄວນຊ່ວຍພັທນາຣັຖບານໃຫ້ມີຄວາມຍຸດຕິທັມແລະໜ້າເຊື່ອຖືຂຶ້ນ. ພຣະເຈົ້າຊົງຕ້ອງການໃຫ້ພວກເຮົາສົ່ງຄືນໃຫ້ຣັຖບານໃນສ່ວນທີ່ເຮົາຍັງເປັນໜີ້ເຂົາ.

ນີ້ເປັນພາກທີນຶ່ງໃນການຕອບຄຳຖາມຂອງພຣະເຢຊູຕໍ່ຜູ້ທີ່ຖາມພຣະອົງ ດ້ວຍການໃຊ້ຜູ້ຖາມຕອບຕາມຮູບ ຂອງກາຍຊາທີ່ສລັກໄວ້ໃນຫລຽນ, ພຣະອົງຍັງໃຊ້ພວກເຂົາຕອບຕາມຮູບຮ່າງຄ້າຍຄືກັນກັບພຣະອົງທີ່ມີຢູ່ໃນຊີວິດ ຂອງເຂົາ. ພວກເຂົາຈຳເປັນຕ້ອງຈື່ໄວ້ວ່າພວກເຂົາຖືກປັ້ນຂຶ້ນມາຕາມລັກສນະຮູບຮ່າງຄ້າຍກັບພຣະເຈົ້າ, ແລະໃນ ຊີວິດນັ້ນ ພ້ອມທຸກສິ່ງທີ່ມີເປັນຂອງພຣະຣາຊທານມາຈາກພຣະຫັດຂອງພຣະອົງ. ໃນການຈົດຈຳຄວາມດີອັນມະຫາ ສານຈາກພຣະເຈົ້າຕໍ່ພວກເຂົາ, ພວກເຂົາຄວນຕອບແທນດ້ວຍການຖວາຍຕົວອັນຈິງໃຈທັງໝົດໃຫ້ກັບພຣະອົງ.

ພຣະເຢຊູບໍ່ໄດ້ຊົງແບ່ງຊີວິດຂອງມະນຸດອອກເປັນສອງສ່ວນເທົ່າກັນ, ຈົ່ງຮັກພັກດີຕໍ່ຣັຖບານແລະຕໍ່ພຣະເຈົ້າ. ພຣະເຈົ້າຕ້ອງການໃຫ້ຄົນນັບຖືໂຄຣົບຣັຖບານ ແຕ່ຈົ່ງຮັກພັກດີຢ່າງສຸດຈິດໃຈໃຫ້ກັບພຣະເຈົ້າ. ຄຣິສຕຽນຈະບໍ່ນະມັສ ການປະເທດຂອງເຂົາ ພວກເຂົາຈະຊ່ວຍສ້າງສາປະເທດໃຫ້ດີຂຶ້ນ ການນະມັສການນັ້ນເປັນຂອງພຣະເຈົ້າ ຢ່າງດຽວ. ມີຊີວິດເປັນຢູ່ເພື່ອພຣະອົງຈະນຳພາພວກເຮົາເປັນປະຊາຊົນທີ່ຊ່ວຍພັທນາໃຫ້ຊາດດີຂຶ້ນ.

## 2. <u>ປະເຊີນກັບລະດັບສິ່ງສຳຄັນໃນຊີວິດ</u>: ມາຣະໂກ 12:28-31

ຂ້າພະເຈົ້າມັກເອົາເຂັມທິດຕັ້ງໄດ້ເທິງໂຕະທຳງານ ເພື່ອເຕືອນໂຕເອງວ່າມີຫລາຍແນວໃນຊີວິດທີ່ຕ້ອງເຮັດ ແລະຕ້ອງເລືອກເຮັດໃຫ້ໄປຕາມລຳດັບ, ພຣະຄຣິດໄດ້ຊົງປະທານເຂັມທິດຝ່າຍວິນຍານ. ພຣະອົງຊົງປະທານຄວາມ ຮູ້ທິດທາງເພື່ອນຳພາໃຫ້ເຮົາຮູ້ຈັກດຳຣົງໃຊ້ຊີວິດໃຫ້ຢູ່ລອດເພື່ອພຣະອົງ.

ນັກທັມຄົນນຶ່ງເຂົ້າມາຫາພຣະເຢຊູເພື່ອຊອກທິດທາງຂອງຊີວິດ ຢາກຮູ້ວ່າມີຂໍ້ບັນຍັດໃດທີ່ຈະຊ່ວຍລາວໃຫ້ມີ ຊີວິດຢູ່ທີ່ດີທີ່ສຸດເພື່ອພຣະເຈົ້າ. ລາວຂໍໃຫ້ພຣະເຢຊູຊົງບອກລາວເຖິງ **ຂໍ້ບັນຍັດຂໍ້ໃດເປັນເອກເປັນໃຫຍ່ກວ່າຂໍ້ບັນຍັດ ທັງປວງ**. ພຣະເຢຊູຊົງຕອບລາວດ້ວຍອ້າງເຖິງຂໍ້ພຣະຄັມພີເດີມ (ພບຍ 6:4-5; ລລວ 19:18). ພຣະເຢຊູຊົງກ່າວວ່າ

ຂໍ້ບັນຍັດທີ່ສຳຄັນທີ່ສຸດແມ່ນຮູ້ຈັກພຣະເຈົ້າທ່ຽງແທ້ອົງດຽວ (**ພຣະອົງເປັນຜູ້ດຽວ**), **ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າ** ດ້ວຍສຸດໃຈດ້ວຍສຸດຈິດ ດ້ວຍສຸດຄວາມຄິດແລະດ້ວຍສຸດກຳລັງຂອງເຈົ້າ, ແລະ**ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ.**

ຂໍ້ຄວາມນີ້ອະທິບາຍເຖິງຄວາມຂັດແຍ່ງພາຍໃນກ່ຽວກັບລະດັບສິ່ງສຳຄັນໃນຊີວິດທີ່ທຸກຄົນຕ້ອງຕໍ່ສູ້. ພຣະເຢຊູໄດ້ຊົງປະທານເຂັມທິດໃຫ້ພວກເຮົາ--ທິດທາງອັນບໍ່ປ່ຽນແປງຂອງເຮົາເພື່ອຈະເລືອກເດີນຜ່ານຄວາມຄັດເລືອກແລະຄວາມກັງວົນອັນຊັບຊ້ອນ. ຈົ່ງມອບຊີວິດໄວ້ກັບພຣະເຈົ້າອົງທ່ຽງແທ້**ອົງດຽວ**, ຢ່າຢູ່ຕາມຄວາມເຫັນຂອງຄົນອື່ນ; ຢູ່ເພື່ອຈິງຮັກພັກດີຕໍ່ພຣະອົງ. ຈົ່ງຮັກພຣະເຈົ້າຜູ້ທ່ຽງແທ້ອົງດຽວດ້ວຍ**ທຸກສິ່ງ**ທີ່ເຈົ້າມີ, ຮັກພຣະເຈົ້າແບບທັມມະດາຈະບໍ່ພົບຊີວິດອັນອຸດົມສົມບູນ. ຈົ່ງມອບ**ຫົວໃຈ**, ສ່ວນເລິກຂອງຄວາມຮູ້ສຶກແລະການເລືອກທີ່ສຳຄັນທີ່ສຸດມອບໃຫ້ແດ່ພຣະເຈົ້າ. ຈົ່ງມອບ**ວິນຍານ**ໃຫ້ພຣະເຈົ້າ, ວາງຊື່ສຽງແລະຈຸດມຸ້ງໝາຍຂອງຊີວິດໄວ້ກັບພຣະຄຸນຂອງພຣະເຈົ້າ. ຈົ່ງມອບ**ຄວາມຄິດ**ໃຫ້ພຣະອົງ ເພື່ອວ່າຄວາມເຫັນໃນຊີວິດແລະທ່າທີຂອງເຈົ້າຈະຖວາຍກຽດແດ່ພຣະອົງ. ຈົ່ງມອບ**ກຳລັງເຫື່ອແຮງ**ໃຫ້ພຣະເຈົ້າດ້ວຍໃຊ້ຄວາມສາມາດທຸກຢ່າງເພື່ອແບ່ງປັນຄວາມຮັກຂອງພຣະອົງ ແລະຖວາຍກຽດແດ່ພຣະນາມຂອງພຣະອົງ. ພຣະເຢຊົງກ່າວວ່າຊີວິດອັນແທ້ຈິງມີຢູ່ໃນຄວາມຮັກ ແລະໃຊ້ຊີວິດຢູ່ເພື່ອພຣະເຈົ້າ.

ພາກທີສອງຂອງຄຳຕອບຂອງພຣະເຢຊູ ສ້າງການຕິດຕໍ່ລະຫວ່າງຄວາມຮັກພຣະເຈົ້າແລະຄວາມຮັກຄົນອື່ນ. ໝາຍຄວາມວ່າພວກເຮົາບໍ່ສາມາດແຍກຄວາມສຳພັນຂອງເຮົາກັບພຣະເຈົ້າອອກຈາກຄວາມສຳພັນຂອງເຮົາກັບຄົນທັງຫລາຍ. ຄວາມຮັກຂອງພຣະເຈົ້າທີ່ມີຕໍ່ເຮົາຊ່ວຍໃຫ້ເຮົາມີເສຣີພາບທີ່ຈະຮັກຄົນອື່ນ ໂດຍບໍ່ໄດ້ສົນໃຈເລີຍວ່າເຂົາເປັນຫຍັງ ຫລືເຂົາສະແດງໂຕຕໍ່ເຮົາແບບໃດ. ພຣະເຢຊູຊົງກ່າວວ່າພື້ນຖານຂອງຄວາມຮັກນັ້ນແມ່ນວິທີທາງທີ່ເຮົາຮັກຕົນເອງ. ການເບິ່ງເຮົາເອງເປັນລູກທີ່ຮັກຂອງພຣະເຈົ້າ ເປັນກຳລັງໃຫ້ເຮົາເຫັນແລະເຮັດກັບຄົນອື່ນດ້ວຍຄວາມຮັກແພງແລະດ້ວຍຄວາມນັບຖື. ການເຮັດກັບຄົນອື່ນຢ່າງບໍ່ມີຮັກແມ່ນອາການຂອງຄວາມເຈັບປ່ວຍຝ່າຍວິນ ຍານ. ເວລາໃດທີ່ເຮົາບໍ່ໄດ້ສະແດງຄວາມຮັກໃຫ້ຄົນອື່ນກໍຈະເປັນເພາະວ່າເຮົາບໍ່ມີຄວາມຮັກທີ່ຈະໃຫ້.

ເຮົາຮັກພຣະເຈົ້າແລະປະສົບຄວາມຮັກຂອງພຣະເຈົ້າຫລາຍເທົ່າໃດ ເຮົາກໍຈະຮັກເພື່ອນບ້ານຂອງເຮົາຫລາຍເທົ່ານັ້ນ. ພຣະເຢຊູຊົງບອກວ່າ **ບໍ່ມີຂໍ້ບັນຍັດຂໍ້ໃດຍິ່ງໃຫຍ່ກວ່ານີ້ອີກແລ້ວ**.
ທ່ານກຳລັງຕິດຕາມຫຍັງທີ່ກຳລັງຊີ້ທາງ ຊີວິດຂອງທ່ານ? ພຣະເຢຊູຊົງກ່າວວ່າ
ທາງດຽວທີ່ນຳໄປສູ່ຊີວິດອັນຄົບບໍຣິບູນແມ່ນຮັກພຣະເຈົ້າແລະຮັກຄົນອື່ນ.

### 3. ***<u>ປະເຊີນກັບຄົນຫລອກລວງ</u>***: ມາຣະໂກ 12:38-40

ວິຫານທີ່ຂ້າພະເຈົ້າຮັບໃຊ້ຢູ່ຄັ້ງນຶ່ງມີບັນຫາໃຫ່ຍກັບເຄື່ອງຂຍາຍສຽງໃນບ່ອນນະມັສການ, ບາງວັນທິດ ເຄື່ອງຂຍາຍສຽງໄດ້ຮັບສັນຍານຈາກສຖານີວິທະຍຸ ແລະສິ່ງສຽງເຂົ້າມາໃນເວລາດຽວກັນທີ່ຂ້າພະເຈົ້າເລີ້ມເທສນາ. ສະມາຊິກໄດ້ຍິນຂ້າພະເຈົ້າແລະການຖ່າຍທອດຈາກວິຫານອີກແຫ່ງນຶ່ງໃນເວລາດຽວກັນ. ເວລາເຄື່ອງລະບົບສຽງດຶງຄວາມສົນໃຈຂອງຄົນໃສ່ຕົວມັນເອງຫລາຍກວ່າເນື້ອຄວາມເທສນາ ມັນເກີດມີບັນຫາຫລາຍ ມັນຕ້ອງຖືກເອົາໄປແປງຫລືປ່ຽນເຄື່ອງໃໝ່. ພຣະເຢຊູຊົງສອນພວກເຮົາໄວ້ວ່າ ພຣະເຈົ້າຮຽກເອີ້ນໄພ່ພົນຂອງພຣະອົງໃຫ້ນຳເອົາຄວາມຮັກຂອງພຣະອົງໄປໃຫ້ໂລກ. ເວລາໃດທີ່ເຮົາເອງນຳເອົາຄວາມສົນໃຈມາໃສ່ຕົວເຮົາເອງຫລາຍກວ່າພຣະຄຳຂອງພຣະເຈົ້າ ເວລານັ້ນເຮົາມີບັນຫາອັນຮ້າຍແຮງທີ່ຈະຕ້ອງແກ້ໄຂ.

ພຣະເຢຊູໄດ້ປະເຊີນໜ້າກັບພວກນັກທັມ ພວກຖືວ່າເປັນຄົນເກັ່ງທາງຂໍ້ບັນຍັດ ກຸ່ມທີ່ມັກສົນໃຈແຕ່ຊອກຫາຄວາມສົນໃຈໃສ່ຕົນເອງຫລາຍກວ່າການຮັບໃຊ້ພຣະເຈົ້າຫລືຊ່ວຍເຫລືອຄົນອື່ນ. ຜ້າຄຸມຂອງເຂົາອາດຈະເຮັດ

ດ້ວຍຜ້າລາຄາດີ ແລະປະດັບດ້ວຍແກ້ວອັນມີຄ່າເພື່ອສະແດງເຖິງຄວາມສໍາຄັນ. ພວກເຂົາຕ້ອງການໃຫ້ຄົນທັກທາຍທີ່ຕລາດ, ພໍໃຈຫລາຍທີ່ຄົນເອີ້ນເຂົາວ່າ "ຣັບບາຍ" ໝາຍຄວາມວ່າ "ອາຈານຂອງຂ້ານ້ອຍ. ນັກທັມເຫລົ່ານີ້ມັກຈະນັ່ງຢູ່ແຖວໜ້າໃນວິຫານເພື່ອໃຫ້ທຸກຄົນເຫັນ. ເຂົາຕ້ອງການນັ່ງຢູ່ບ່ອນທີ່ມີກຽດຫຼືບ່ອນໃກ້ເຈົ້າພາບ ເພາະສະແດງເຖິງຄວາມເປັນຄົນສໍາຄັນ

ພຣະເຢຊູຊົງປະເຊີນໜ້າກັບພວກນັກທັມເຫລົ່ານີ້ເພາະເຂົາສົນໃຈແຕ່ຕົນເອງ ພຣະອົງກໍຍັງຊົງຮູ້ອີກວ່າການອະທິຖານອັນຍາວນານຂອງເຂົາບໍ່ແມ່ນການນະມັສການທີ່ມາຈາກໃຈຈິງ ພໍແຕ່ເປັນການສະແດງເພື່ອອວດອ້າງ. ແທນທີ່ເຂົາຄວນສະແດງຄວາມຮັກຕໍ່ຜູ້ທີ່ທຸກຈົນ ພວກເຂົາໃຊ້ຄວາມຮູ້ຂອງເຂົາເອົາປຽບພວກແມ່ໝ້າຍ ເຂົາເອົາປຽບຄົນຈົນເພື່ອປໂຍດຂອງຕົນເອງ. ໃນໂອກາດທີ່ອ້າງຕົນເອງວ່າເປັນຜູ້ນໍາຂອງຜູ້ມີຄວາມເຊື່ອໃນພຣະເຈົ້າ ພວກນີ້ບໍ່ໄດ້ຮັກພຣະເຈົ້າ, ບໍ່ຮັກຄົນອື່ນ ເຂົາເປັນຄົນໜ້າຊື່ໃຈຄົດ ໜ້າໄຫວ້ຫຼັງຫຼອກ.

ການມີຊີວິດເພື່ອອວດອ້າງຄົນອື່ນໂດຍປາສຈາກການຮັກພຣະເຈົ້າຢ່າງຈິງໃຈ ຫລືຊ່ວຍເຫຼືອຄົນປຽບເໝືອນເຈັ້ຽທໍ່ຂອງຂວັນທີ່ມີແຕ່ກັບເປົ່າເທົ່ານັ້ນ. ພວກເຮົາອາດຈະເບິ່ງຄືງາມແຕ່ທາງນອກ ແຕ່ບໍ່ມີຫຍັງຢູ່ທາງໃນ ການວັດແທກຄວາມເຊື່ອບໍ່ແມ່ນການດຶງເອົາຄວາມສົນໃຈໃຫ້ກັບຕົນເອງຫຼາຍເທົ່າໃດ ແຕ່ແມ່ນການຖວາຍພຣະກຽດແດ່ພຣະເຈົ້າຫຼາຍເທົ່າໃດ.

## ບົດຮຽນຊີວິດ:

ຄຣິສຕຽນທີ່ຈິງຈັງຕໍ່ການໃຊ້ຊີວິດຢູ່ໃນຄວາມເຊື່ອ ມັກຈະຕົກຢູ່ໃນຄວາມຂັດແຍ່ງກັບວິທີການຂອງໂລກ. ພວກເຮົາຕ້ອງສູ້ແລະເອົາຊະນະສິງຄາມຖ້າພວກເຮົາຖືວ່າເຮົາເປັນຜູ້ຕິດຕາມທີ່ສັດຊື່ຂອງພຣະເຢຊູ. ໃນບົດຮຽນນີ້ພຣະອົງໄດ້ໃຫ້ເຮົາເຫັນຂໍ້ຂັດແຍ່ງສາມຈຸດທີ່ພວກເຮົາຕ້ອງປະເຊີນ ແລະວິທີເອົາຊະນະ, ພວກເຮົາ…

- ຈົ່ງໃຫ້ຄວາມອຸ້ມຊູແກ່ປະເທດຊາດເທົ່າທີ່ຄວນ; ພວກເຮົາຄວນເສັຽພາສີ, ແຕ່ເຮົາຄວນຊ່ວຍສ້າງຊາດໃຫ້ດີຂຶ້ນເລື້ອຍໆ. ພວກເຮົາບໍ່ຄວນໃຫ້ການນະມັສການຕໍ່ຣັຖບານ. ແຕ່ເຮົາຄວນຖວາຍຄວາມຈົງຮັກພັກດີຢ່າງສຸດຈິດສຸດໃຈຕໍ່ພຣະເຈົ້າຜູ້ຊົງສ້າງ, ໃຫ້ຄວາມຊ່ວຍເຫຼືອ ແລະອວຍພອນໃຫ້ເຮົາມີຫລາຍສິ່ງດີໆ.
- ຈົ່ງໃຫ້ທິດທາງຂອງພຣະເຢຊູນໍາພາຊີວິດຂອງເຮົາ--ຮັກພຣະເຈົ້າອົງທ່ຽງແທ້ດ້ວຍທຸກສິ່ງທີ່ເຮົາມີ, ໃນພະລັງຄວາມຮັກຂອງພຣະອົງທີ່ໃຫ້ເຮົາມີ, ຈົ່ງແບ່ງປັນຄວາມຮັກນັ້ນໃຫ້ຄົນອື່ນດ້ວຍ. ຜົນຂອງຄວາມຮັກອັນແທ້ຈິງຂອງພຣະອົງກໍຄືຮັກຄົນທີ່ຢູ່ຮອບຂ້າງເຮົາ.
- ຈົ່ງມີຊີວິດເພື່ອຮັບໃຊ້ຄົນອື່ນ ແລະຖວາຍກຽດແດ່ພຣະເຈົ້າ, ຢ່າອວດອ້າງເພື່ອນໍາເອົາກຽດໃຫ້ຕົນເອງ. ພວກເຮົາຄວນຕໍ່ສູ້ກັບຄວາມຫລອກລວງໜ້າໄຫວ້ຫລັງຫລອກໃນໂບດຂອງເຮົາ.

ທ່ານ ແພທ ທຸງອແມນ ເປັນນັກກິລາຟຸດບອນ ມືອາຊີບ ທີ່ໄດ້ເງິນເດືອນຫລາຍ ມີຊື່ສຽງໂດ່ງດັງ ແລະມີອະນາຄົດໄກ. ຕໍ່ມາ ຫລັງຈາກການໂຈມຕີ ເດືອນເກົ້າ ທີ 11, 2000, ປະເທດເຮົາກໍມີບັນຫາ. ທ່ານ ແພທ ກໍໄດ້ລາຈາກການມີຊື່ສຽງເຂົ້າເປັນທະຫານ. ເພາະຫຍັງ? ເພາະລາວເຊື່ອວ່າການຕໍ່ສູ້ທີ່ປະເທດຊາດກໍາລັງປະເຊີນຢູ່ສໍາຄັນທີ່ສຸດ ທີ່ລາວຄວນເຂົ້າຮ່ວມ. ທ່ານ ແພທ ທຸງອແມນ ຕາຍໃນໜ້າທີ່ຮັບໃຊ້ປະເທດຂອງລາວ, ແຕ່ການເສັຽສະລະທຸກສິ່ງທີ່ລາວມີໃຫ້ແກ່ຊາດທີ່ລາວຮັກນັ້ນ ເປັນການໜູນໃຈໃຫ້ຫລາຍໆ ຄົນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org  ໂດຍ  BS